ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

*****************

ກະຊວງອຸດສາຫະກຳ ແລະ ການຄ້າ | ເລກທີ 1238 /ອຄ.ຄພນ

ນະຄອນຫລວງວຽງຈັນ,ວັນທີ 28 ກໍລະກົດ 2008

# ແຈ້ງການ

**ເຖິງ : - ບັນດາກະຊວງ,ອົງການທຽບເທົ່າກະຊວງ, ແຂວງ, ນະຄອນຫຼວງ ແລະ ບັນດາ ພະແນກ ອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫລວງ ໃນຂອບເຂດ ທົ່ວປະເທດ.**

**- ບັນດາຫົວໜ່ວຍທຸລະກິດ ແລະ ຜູ້ທີ່ມີຈຸດປະສົງຢາກສ້າງຕັ້ງວິສາຫະກິດ ເພື່ອເຄື່ອນໄຫວ ດຳເນີນທຸລະກິດ ຢູ່ ສປປລາວ.**

**ເລື່ອງ : ນັບແຕ່ວັນທີ 08 / 08 / 2008 ເປັນຕົ້ນໄປ ເປີດຮັບການແຈ້ງຂຶ້ນທະບຽນວິສາຫະກິດ ຕາມກົດໝາຍ ວ່າດ້ວຍ ວິສາຫະກິດ(ໃໝ່) .**

- ອີງຕາມກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ 11/ສພຊ, ລົງວັນທີ 9 ພະຈິກ 2005 .
- ອີງຕາມດຳລັດ ສະບັບເລກທີ 188/ນຍ, ລົງວັນທີ 17 ສິງຫາ 2006, ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກະຊວງອຸດສາຫະກຳ ແລະ ການຄ້າ.

ເພື່ອຈັດຕັ້ງຜັນຂະຫຍາຍຄຳສັ່ງຂອງນາຍົກລັດຖະມົນຕີ ເລກທີ37/ນຍ,ລົງວັນທີ 24 ຕຸລາ 2007 ແລະບັນດານິຕິກຳກ່ຽວກັບການແຈ້ງຂຶ້ນທະບຽນວິສາຫະກິດ ຕາມກົດໝາຍວ່າດວ້ຍວິສາຫິດ (ໃໝ່) ຜ່ານລະບົບປະຕູດຽວ,ທີ່ສະດວກສະບາຍ,ວ່ອງໄວ,ໂປ່ງໃສ່,ເຂົ້າໃຈງ່າຍສຳລັບປະຊາຊົນຫຼືຜູ້ລົງທຶນພາຍໃນແລະຕ່າງປະເທດທີ່ມີຈຸດປະສົງຢາກສ້າງຕັ້ງທຸລະກິດ ເພື່ອປະກອບອາຊີບ, ສ້າງບັນຍາກາດທາງດ້ານທຸລະກິດທີ່ເອື້ອອຳນວຍຢ່າງເຕັມສ່ວນ ໃຫ້ແກ່ການກຳເນີດວິສາຫະກິດ ມີການຂະຫຍາຍຕົວທາງດ້ານ ຄຸນນະພາບ ແລະປະລິມານ, ແນໃສ່ແກ້ໄຂອຸປະສັກສິ່ງກີດຂວາງຕໍ່ການສ້າງຕັ້ງວິສາຫະກິດທຸກຮູບແບບ ໃຫ້ໄດ້ເຄື່ອນໄຫວ ດຳເນີນທຸລະກິດສອດຄ່ອງຕາມລະບຽບກົດໝາຍເວົ້າລວມ, ເວົ້າສະເພາະການຈັດຕັ້ງປະຕິບັດການແຈ້ງຂຶ້ນທະບຽນວິສາຫະກິດ ແລະ ການແຈ້ງດັດແກ້ໃບທະບຽນວິສາຫະກິດ ຖືກຕ້ອງຕາມກົດໝາຍວ່າດ້ວຍວິສາຫະກິດ ແລະ ໃຫ້ເປັນເອກະພາບໃນຂອບເຂດທົ່ວປະເທດ, ມີລະບົບການສົ່ງເສີມ, ຕິດຕາມ ເພື່ອກະຕຸກຊຸກຍູ້ບັນດາຫົວໜ່ວຍວິສາຫະກິດໃຫ້ມີຄວາມເຕີບໃຫຍ່ເຂັ້ມແຂງ, ເປັນພື້ນຖານໜັກແໜ້ນແກ່ການພັດທະນາເສດຖະກິດຂອງຊາດ ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າໃຫ້ດີຂຶ້ນ.

**ກະຊວງອຸດສາຫະກຳແລະການຄ້າ ຖືເປັນກຽດແຈ້ງມາຍັງທ່ານຊາບວ່າ:** ນັບແຕ່ວັນທີ08/08/2008 ເປັນຕົ້ນໄປ ຢູ່ຫ້ອງການເຈົ້າໜ້າທີ່ທະບຽນວິສາຫະກິດນະຄອນຫຼວງວຽງຈັນ ຊຶ່ງມີທີ່ຕັ້ງຢູ່ ກົມການຄ້າພາຍໃນກະຊວງອຸດສາຫະກຳແລະການຄ້າ ແລະ ຫ້ອງການເຈົ້າໜ້າທີທະບຽນວິສາຫກິດຕັ້ງຢູ່ຂັ້ນພະແນກ

ອຸດສາຫະກຳແລະການຄ້າແຂວງ ຈະໄດ້ເປີດຮັບການແຈ້ງຂື້ນທະບຽນວິສາຫະກິດ ຕາມກົດໝາຍວ່າດ້ວຍວິສາຫະກິດ(ໃໝ່)ໃຫ້ແກ່ບຸກຄົນ ຫຼື ນິຕິບຸກຄົນທີ່ມີຈຸດ ປະສົງຢາກສ້າງຕັ້ງວິສາຫະກິດແລະປັບປຸງດັດແກ້ໃບທະບຽນວິສາຫະກິດໃຫ້ແກ່ບັນດາຫົວໜ່ວຍທຸລະກິດ ທີ່ໄດ້ຂື້ນທະບຽນວິສາຫະກິດ ຕາມກົດໝາຍວ່າດ້ວຍທຸລະກິດ ເພື່ອໃຫ້ສອດຄ່ອງຕາມກົດໝາຍວ່າດ້ວຍວິສາຫະກິດ ຕາມລະບົບ,ຂັ້ນຕອນການແຈ້ງຂື້ນທະບຽນວິສາຫະກິດ (ໃໝ່) ທີ່ໄດ້ກຳນົດລະອຽດຢູ່ໃນແຈ້ງການສະບັບເລກທີ 1989/ອຄ, ລົງວັນທີ02ພະຈິກ2007 ແລະ ຄຳແນະນຳ ສະບັບເລກທີ 0995/ອຄ, ລົງວັນທີ 19ມິຖຸນາ 2008, ໂດຍມີພື້ນຖານລວມດັ່ງນີ້ :

## 1. ຂັ້ນຄຸ້ມຄອງ, ການພິວພັນ,ລາຄາແບບຟອມແຈ້ງຂື້ນທະບຽນວິສາຫະກິດ.

ຂະແໜງອຸດສາຫະກຳແລະການຄ້າ ໄດ້ສ້າງຕັ້ງຫ້ອງການເຈົ້າໜ້າທີ່ທະບຽນວິສາຫະກິດ “ຫຈທ”, ມີຊື່ເປັນພາສາສາກົນວ່າ:Enterprise Registry Office “ERO” ຕາມຂໍ້ຕົກລົງສະບັບເລກທີ0225/ອຄ, ລົງວັນທີ 14/02/2007 ມີໜ້າທີ່ໂດຍລວມດັ່ງນີ້ :

ກ. ຂັ້ນສູນກາງ: ຫ້ອງການເຈົ້າໜ້າທີ່ທະບຽນວິສາຫະກິດນະຄອນຫລວງວຽງຈັນ ຕັ້ງຢູ່ ກົມການຄ້າພາຍໃນ ກະຊວງອຸດສາຫະກຳແລະການຄ້າ ເປັນສູນລວມຖານຂໍ້ມູນແຫ່ງຊາດ (National Database) ກ່ຽວກັບທະບຽນວິສາຫະກິດ, ຮັບການແຈ້ງຂື້ນ, ດັດແກ້ ແລະ ຖອນທະບຽນວິສາຫະກິດ, ສູນລວມຮັບການຈອງຊື່ວິສາຫະກິດທົ່ວປະເທດ ເພື່ອເຊື່ອມຕໍ່ກັບທຸກຂະແໜງການທີ່ກ່ຽວຂ້ອງ, ສະໜອງແບບຟອມເປັນເຈ້ຍ, ຊີດີ (CD), ຂໍ້ມູນດ້ານທຸລະກິດ ແລະ ອື່ນໆ.

ຂ. ຂັ້ນທ້ອງຖິ່ນ: ຕັ້ງຢູ່ ບັນດາພະແນກອຸດສາຫະກຳແລະການຄ້າແຂວງ ໃນຂອບເຂດທົ່ວປະເທດ ຮັບການແຈ້ງຂື້ນ, ດັດແກ້ ແລະ ຖອນ ທະບຽນວິສາຫະກິດ,ຮັບການຈອງຊື່ວິສາຫະກິດສຳລັບວິສາຫະກິດມີທີ່ຕັ້ງຢູ່ພາຍໃນແຂວງ ຕາມການແບ່ງຂັ້ນຄຸ້ມຄອງ, ສະໜອງແບບຟອມ ເປັນເຈ້ຍ, ຊີດີ (CD), ຂໍ້ມູນດ້ານທຸລະກິດ ແລະ ອື່ນໆ.

ຄ. ບັນດາແບບຟອມສາມາດພິວພັນເອົາ ນຳບັນດາ ຫ້ອງການເຈົ້າໜ້າທີ່ ທະບຽນວິສາຫະກິດ “ຫຈທ” ໃນຂອບເຂດທົ່ວປະເທດ ຫລື ເອົານຳ ເວບໄຊ້ www.moic.gov.la ເພື່ອມາປະກອບເອກະສານໂດຍສາມາດ ຕື່ມເນື້ອໃນໃສ່ ຮ່າງແບບຟອມ ດ້ວຍການຂຽນ,ພິມດີດ ຫຼື ພິມດ້ວຍຄອມພິວເຕີກໍໄດ້.

ງ. ລາຄາຄ່າແບບຟອມແຈ້ງຂື້ນທະບຽນວິສາຫະກິດ ເປັນເອກະພາບທົ່ວປະເທດປະກອບມີ :

- ແບບຟອມ ວິສາຫະກິດສ່ວນບຸກຄົນ ລວມ 40.000.ກີບ/ຊຸດ
- ແບບຟອມ ວິສາຫະກິດຮຸ້ນສ່ວນ ແລະ ບໍລິສັດລວມ 90.000.ກີບ/ຊຸດ

ທຸກໆແບບຟອມເອກະສານແຈ້ງຂື້ນທະບຽນວິສາຫະກິດຈະໄດ້ມາດ້ວຍຮູບການໃດກໍຕາມ ຖ້າບໍ່ມີກາປະທັບຂອງ “ຫຈທ” ຈະເກັບຄ່າ ແບບຟອມ ໃນເວລາແຈ້ງຂື້ນທະບຽນວິສາຫະກິດ.

## 2.) ຂັ້ນຕອນການແຈ້ງຂື້ນທະບຽນວິສາຫະກິດ.

### ກ. ການຈອງຊື່ວິສາຫະກິດ.

ທຸກການສະເໜີສ້າງຕັ້ງວິສາຫະກິດ ເພື່ອເຄື່ອນໄຫວດຳເນີນທຸລະກິດ ຢູ່ ສປປ ລາວ ຕ້ອງໄດ້ສະເໜີຈອງຊື່ ນຳຫ້ອງການເຈົ້າໜ້າທີ່ທະບຽນວິສາຫະກິດ ເພື່ອປະກອບເອກະສານແຈ້ງຂື້ນ ທະບຽນວິສາຫະກິດ ຕາມກົດໝາຍວ່າດ້ວຍວິສາຫະກິດ.

ສຳລັບການລົງທຶນຂອງຕ່າງປະເທດ ກ່ອນຈະສະເໜີຂໍໃບອະນຸຍາດລົງທຶນ ຕ້ອງໄດ້ມີ ໃບຮັບຮອງຊື່ວິສາຫະກິດ.

**ຂ. ການແຈ້ງຂຶ້ນທະບຽນວິສາຫະກິດ.**

- ສ່ວນການລົງທຶນຂອງຕ່າງປະເທດ ຕ້ອງມີໃບອະນຸຍາດລົງທຶນຈາກຂະແໜງແຜນການ ແລະ ການລົງທຶນ (ຂັ້ນສູນກາງ ຫຼື ທ້ອງຖິ່ນ),ຖ້າເອກະສານຄົບຖ້ວນຈະຂຶ້ນທະບຽນວິສາຫະກິດພາຍໃນ 02 ວັນ ລັດຖະການ

- ການລົງທຶນຂອງລັດ ຫຼື ລັດປະສົມກັບພາກສ່ວນອື່ນ ຕ້ອງໄດ້ຮັບອະນຸຍາດສ້າງຕັ້ງຈາກຂະແໜງການເງິນ ສ່ວນຜູ້ລົງທຶນເອກະຊົນພາຍໃນ ໃຫ້ປະກອບເອກະສານແຈ້ງຂຶ້ນທະບຽນວິສາຫະກິດນຳ "ຫຈທ" ໄດ້ ສຳລັບປະເພດທຸລະກິດ ທີ່ບໍ່ຢູ່ໃນບັນຊີປະເພດທຸລະກິດຄວບຄຸມ ຈະຂຶ້ນທະບຽນວິສາຫະກິດພາຍໃນ 10 ວັນລັດຖະການ. ຖ້າຢູ່ໃນບັນຊີປະເພດທຸລະກິດຄວບຄຸມ "ຫຈທ" ຈະຂຶ້ນທະບຽນວິສາຫະກິດໃຫ້ສຳເລັດພາຍໃນ 03 ວັນລັດຖະການ ພາຍຫຼັງຂະແໜງການກ່ຽວຂ້ອງຕອບເຫັນດີ ແລະ ແຈ້ງຕອບເປັນລາຍລັກອັກສອນກ່ຽວກັບເຫດຜົນການບໍ່ຂຶ້ນທະບຽນວິສາຫະກິດຊ້າສຸດບໍ່ໃຫ້ເກີນ 10 ວັນລັດຖະການ(ໃນກໍລະນີທົ່ວໄປ) ແລະ 03 ວັນ ລັດຖະການໃນກໍລະນີຂະແໜງການກ່ຽວຂ້ອງຕອບບໍ່ເຫັນດີ.

**3.) <u>ການດັດແກ້ໃບທະບຽນວິສາຫະກິດ</u>**

ໃນໄລຍະເບື້ອງຕົ້ນ ໃຫ້ບັນດາຫົວໜ່ວຍທຸລະກິດ ທີ່ໄດ້ຂຶ້ນທະບຽນວິສາຫະກິດ ຕາມກົດໝາຍວ່າດ້ວຍທຸລະກິດ ທີ່ຂັ້ນກະຊວງແລະຂັ້ນພະແນກ ອຸດສາຫະກຳແລະການຄ້າ ແຂວງ,ນະຄອນຫລວງ ອະນຸມັດອອກໃຫ້ໃນເມື່ອກ່ອນໃຫ້ມາປັບປຸງດັດແກ້ແຈ້ງຂຶ້ນທະບຽນວິສາຫະກິດ ຕາມກົດໝາຍວ່າດ້ວຍວິສາຫະກິດ ຊ້າສຸດບໍ່ໃຫ້ກາຍເດືອນ ພຶດສະພາ 2009

ພາຍຫຼັງສຳເລັດການດັດແກ້ໃບທະບຽນວິສາຫະກິດ ຂັ້ນກະຊວງ ແລະ ຂັ້ນພະແນກແລ້ວ ຈະໄດ້ສືບຕໍ່ຈັດຕັ້ງປະຕິບັດຢູ່ຂັ້ນເມືອງ, ໂດຍເຮັດເປັນແຕ່ລະເມືອງ ໃນຂອບເຂດທົ່ວປະເທດ, ຖ້າຫົວໜ່ວຍທຸລະກິດໃດມີຈຸດປະສົງຢາກມາແຈ້ງດັດແກ້ກ່ອນກໍໄດ້.

4.)ຫ້ອງການເຈົ້າໜ້າທີ່ທະບຽນວິສາຫະກິດ ຂັ້ນສູນກາງແລະ ທ້ອງຖິ່ນ ມີກາປະທັບເປັນຂອງຕົນ ແລະ ມີສິດນຳໃຊ້ເຂົ້າໃນວຽກງານລັດຖະການ.

**ດັ່ງນັ້ນ,ຈິ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ປະຕິບັດ .**

ລັດຖະມົນຕີວ່າການ
ກະຊວງອຸດສາຫະກຳແລະການຄ້າ

ດຣ. ນາມ ວິຍາເກດ

<u>ສຳເນົາສົ່ງ:</u>
- ຫ້ອງວ່າການສູນກາງພັກ " ເພື່ອລາຍງານ "
- ສຳນັກງານນາຍົກລັດຖະມົນຕີ " ເພື່ອລາຍງານ "
- ບັນດາແຂວງ " ເພື່ອລາຍງານ "
- ບັນດາກະຊວງ,ອົງການທຽບເທົ່າ " ເພື່ອຊາບແລະປະຕິບັດ "
- ພະແນກອຸດສາຫະກຳແລະການຄ້າ " ເພື່ອຈັດຕັ້ງປະຕິບັດ "
- ພາກສ່ວນອື່ນໆ " ເພື່ອຊາບແລະປະຕິບັດ "
- ສຳເນົາ.